**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະຖານເອກອັກຄະລັດຖະທູດ

ສປປ ລາວ - ວໍຊິງຕັນ, ດີຊີ

ເລກທີ 1396 /ສລວ.ກສ.22

ທີ່ນະຄອນຫຼວງວໍຊິງຕັນ, ດີຊີ, ວັນທີ 16 ທັນວາ 2022

# ແຈ້ງການ

**ເຖິງ: ພີ່ນ້ອງເຊື້ອຊາດລາວຢູ່ປະເທດສະຫະລັດອາເມລິກາ ແລະ ການາດາ,**

**ເລື່ອງ: ການເກັບຄ່າທຳນຽມວີຊາ ແລະ ຄ່າບໍລິການກັບດ່ານສາກົນ.**

- ອີງຕາມລັດຖະບັນຍັດຂອງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002 ປປທ, ລົງວັນທີ 17 ມິຖຸນາ 2021;
- ອີງຕາມແຈ້ງການຂອງກະຊວງການຕ່າງປະເທດ ສະບັບເລກທີ 11700/ກກສ.1 ກ່ຽວກັບການເກັບຄ່າທຳນຽມວີຊາກັບດ່ານ ແລະ ຄ່າບໍລິການ;

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳປະເທດສະຫະລັດອາເມລິກາ ແລະ ການາດາ, ທີ່ມີສຳນັກງານຕັ້ງຢູ່ນະຄອນຫຼວງວໍຊິງຕັນ, ດີຊີ ຂໍຖືເປັນກຽດແຈ້ງມາຍັງພີ່ນ້ອງເຊື້ອຊາດລາວຢູ່ປະເທດສະຫະລັດອາເມລິກາ ແລະ ການາດາ ຊາບວ່າ: **ນັບແຕ່ເດືອນ ມິຖຸນາ 2021 ເປັນຕົ້ນມາ, ຄ່າທຳນຽມວີຊາກັບດ່ານສາກົນ ສຳລັບຄົນເຊື້ອຊາດລາວຢູ່ຕ່າງປະເທດ, ສະມາຊິກຄອບຄົວ ລວມທັງສະມາຊິກຄອບຄົວຂອງພົນລະເມືອງລາວທີ່ຖືສັນຊາດຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ແມ່ນ 40 ໂດລາ ສະຫະລັດ/ຄົນ/ເທື່ອ** (ຄ່າທຳນຽມດັ່ງກ່າວແມ່ນກວມເອົາຄົນເຊື້ອຊາດລາວທີ່ມີອາຍຸຕ່ຳກວ່າ 15 ປີ ແລະ 65 ປີ ຂຶ້ນເມືອ).

ດັ່ງນັ້ນ, ສະຖານທູດຈຶ່ງແຈ້ງມາຍັງທ່ານເພື່ອຊາບ ຕາມທາງຄວນດ້ວຍ.

**ພະແນກກົງສຸນ**

**ສະຖານທູດລາວທີ່ວໍຊິງຕັນ, ດີຊີ**